# ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 20 ກຸມພາ 2022 (02-20-2022)

---

## ຂຸມຊີວິດຂອງຄວາມຂົມຂື່ນ.

*ອາຫານຊິ້ນໃດຢູ່ເທິງໂຕະກິນເຂົ້າທີ່ທ່ານຢ້ານຕອນເປັນເດັກນ້ອຍ?*

**ຈຸດສຳຄັນໃນບົດຮຽນ: ທຸກໆສາຍ**ສັມພັນສາມາດກ້າວໜ້າຕໍ່ໄປດ້ວຍການໃຫ້ອະພັຍເທົ່ານັ້ນ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ເມື່ອຍາມເປັນເດັກນ້ອຍ, ພວກເຮົາສາມາດເບິ່ງອາຫານບາງຢ່າງ ແລະແນ່ໃຈວ່າມັນລົດຊາດບໍ່ດີ. ແລະອາຫານບາງຢ່າງສາມາດເຮັດໃຫ້ພວກເຮົາຕື່ນເຕັ້ນ. ຕົວຢ່າງ: ໝາກແອັບໂປ ບໍ່ມີຫຍັງຈະແຊບໄປກວ່າການກັດກິນໝາກແອັບໂປສີແດງ-ແລະບໍ່ມີຫຍັງທີ່ຈະມີລົດຊາດຮ້າຍໄປກວ່າການພົບວ່າໝາກແອັບໂປນັ້ນຂົມໄປໜ້ອຍນຶ່ງ! ທ່ານບໍ່ຢາກໃຫ້ຄົນຖ່າຍຮູບເອົາທ່ານໃນຕອນນັ້ນ ເພາະຄວາມຂົມຂື່ນດັ່ງນັ້ນເປັນສາເຫດໃຫ້ພວກເຮົາສະດຸ້ງແລະໜ້າບູດບຶ້ງ.

ໃບໜ້າແຫ່ງຄວາມຂົມຂື່ນນັ້ນບໍ່ເປັນທີ່ດຶງດູດໃຈ, ເຖິງປານນັ້ນຫຼາຍຄົນສວມໃສ່(ມີໜ້າຕາ)ແບບນັ້ນໃນມື້ນີ້. ການສະແດງອອກທີ່ຂົມຂື່ນຂອງພວກເຂົາເຈົ້າບໍ່ແມ່ນເພາະວ່າອາຫານລົດບໍ່ດີ, ແຕ່ເປັນເພາະຊ່ວງເວລາທີ່ເຈັບປວດໃນອະດີດຂອງພວກເຂົາເຈົ້າ. ພວກເຮົາສາມາດລ້າງຄວາມຂົມຂື່ນຂອງອາຫານໃຫ້ສະອາດ, ແຕ່ຄວາມຂົມຂື່ນທີ່ມາຈາກການທໍລະຍົດ (ທັກຫຼັງ) ຂອງຄົນອື່ນ ຫຼືມາຈາກການຕັດສິນໃຈຜິດຂອງຕົນເອງສາມາດ<u>ປຸ້ນເອົາຄວາມຊົມຊື່ນຍິນດີ</u> <u>ແລະປ້ອງກັນພວກເຮົາຈາກການເດີນໜ້າກ້າວໄປກັບພຣະເຈົ້າແລະກັບຄົນອື່ນ</u>.

ໂຢເຊັບໄດ້ສະແດງສີໜ້າທີ່ແຕກຕ່າງອອກໄປຈາກການກ່າວມານີ້. ໂຢເຊັບໃຫ້ແບບຢ່າງທີ່ດຶງດູດໃຈສຳລັບພວກເຮົາໃຫ້ເຮັດຕາມ, ໃນຂນະທີ່ລາວໄດ້ປະຕິເສດທີ່ຈະເປັນຄົນຂົມຂື່ນ. ລາວເລືອກເອົາການໃຫ້ອະພັຍແກ່ບັນດາພວກອ້າຍຂອງລາວທີ່ໄດ້ກະທຳຕໍ່ລາວໃນອະດີດທີ່ຜ່ານມາ. **<u>ພວກເຮົາກໍເຊັ່ນດຽວກັນ ສາມາດເລືອກເອົາຄວາມຂົມຂື່ນ ຫຼື ສິ່ງທີ່ດີກວ່ານັ້ນ.</u>**

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

### 1. <u>ປະຖົມມະການ 45:1-3</u>

*[1] ໂຢເຊັບບໍ່ສາມາດຈະລະງັບຄວາມຮູ້ສຶກຂອງຕົນຕໍ່ໜ້າຜູ້ຮັບໃຊ້ທັງໝົດໄດ້ ສະນັ້ນເພິ່ນຈຶ່ງຮ້ອງອອກມາວ່າ "ໃຫ້ທຸກຄົນອອກໄປ" ເວລາເພິ່ນບອກພວກອ້າຍແລະນ້ອງຂອງຕົນວ່າເພິ່ນຄືໃຜນັ້ນ ບໍ່ມີຄົນອື່ນເລີຍຢູ່ທີ່ນັ້ນ. [2] ເພິ່ນໄຫ້ສະອຶກສະອື້ນສຽງດັງຈົນຊາວເອຢິບໄດ້ຍິນ ແລະຂ່າວນີ້ກໍແຜ່ໄປເຖິງພະລາຊະວັງ. [3] ໂຢເຊັບເວົ້າຕໍ່ພວກອ້າຍວ່າ, "ຂ້ອຍແມ່ນໂຢເຊັບ! ພໍ່ຂອງຂ້ອຍຍັງມີຊີວິດຢູ່ບໍ?" ພວກອ້າຍພາກັນຢ້ານກົວຈົນບໍ່ສາມາດຕອບເພິ່ນໄດ້.*

ພວກເຮົາທັງໝົດມີຊ່ວງເວລາທີ່ຄວາມຮູ້ສຶກອາລົມຂອງພວກເຮົາຖ້ວມລົ້ນພວກເຮົາ. ມັນສາມາດເກີດຂຶ້ນໄດ້ໃນຂນະທີ່ເຮົາບໍ່ນຶກບໍ່ຝັນທີ່ສຸດ. ສຽງເພງອອກມາຈາກວິທະຍຸແລະຈູດລະເບີດຄວາມຊົງຈຳໃນສມັຍຍັງນ້ອຍ. ນ້ຳຕາເລີ້ມຫຼັ່ງໄຫຼ. ຄວາມຮູ້ສຶກອາລົມແມ່ນພາກສ່ວນນຶ່ງຂອງຂອງປະທານຈາກພຣະເຈົ້າທີ່ຊົງມອບໃຫ້ແກ່ມວນມະນຸດ. ຜູ້ທີ່ມີສຸຂພາບດີລະມັດລະວັງຕໍ່

ຄວາມຮູ້ສຶກອາລົມຂອງພວກເຂົາເຈົ້າ ແລະແບ່ງປັນຄວາມຮູ້ສຶກຂອງພວກເຂົາເຈົ້າກັບພຣະເຈົ້າແລະກັບຜູ້ຮັກແພງ. ໂຢເຊັບໄດ້ມີປະສົບການຄື້ນອາລົມດັ່ງນັ້ນ. ໂຢເຊັບໄດ້ "ລໍ້ຫຼິ້ນ" ກັບພວກບັນດາອ້າຍນັບຕັ້ງແຕ່ພວກເພິ່ນໄດ້ໄປຢຽ້ມຢາມເອຢິບຄັ້ງແລກ, ແຕ່ເຫດການທີ່ສຸດທ້າຍກໍໄດ້ເຮັດໃຫ້ລາວສູນເສັຽຄວາມສງົບ. ໃນຂນະທີ່ຢູດາເວົ້າເຖິງເຣື່ອງເບັນຢາມິນ(ນ້ອງຊາຍຫຼ້າ), ຄວາມຮັກແລະຄວາມເມດຕາສົງສານຂອງພວກອ້າຍທີ່ມີຕໍ່ເບັນຢາມິນແລະພໍ່ຂອງພວກເຂົາເຈົ້າໄດ້ແຕະຕ້ອງຈິດໃຈຂອງໂຢເຊັບຢ່າງເລິກເຊິ່ງ (ປຖກ 44:18-34). ໂຢເຊັບບໍ່ສາມາດອົດກັ້ນຄວາມຮູ້ສຶກຕໍ່ໜ້າບັນດາຜູ້ທີ່ປາກົດຢູ່ຕໍ່ໜ້າ. ເຖິງເວລາທີ່ລາວຈຳເປັນຕ້ອງຍອມຮັບຄວາມຈິງແລະແບ່ງປັນຄວາມຮູ້ສຶກທີ່ມີຢູ່ໃນຫົວໃຈ, ດັ່ງນັ້ນລາວຈຶ່ງໄດ້ອອກຄຳສັ່ງໃຫ້ບັນດາພະນັກງານອອກໄປຈາກຫ້ອງ.

ແນ່ນອນທີ່ສຸດ ໂຢເຊັບໄດ້ມີຄວາມເຊື່ອໃນພຣະເຈົ້າ, ແຕ່ເຖິງຈຸດນີ້, ລາວຍັງໄດ້ລົ້ມລຸກຄຸກຄານກັບຄວາມຂົມຂື່ນແລະຄວາມອະຍຸຕິທັມທັງໝົດທີ່ໄດ້ເກີດຂຶ້ນກັບລາວ. ຄວາມບໍ່ສັດຊື່ແລະຄວາມໂຫດຮ້າຍຂອງບັນດາອ້າຍຂອງລາວແນ່ນອນຈະຕ້ອງຢູ່ໃນໃຈຂອງລາວເລື້ອຍໆໃນຮອບສິບສາມປີທີ່ຜ່ານມາ, ແຕ່ການທີ່ໄດ້ເຫັນແລະໄດ້ຍິນພຶດຕິກັມທີ່ປ່ຽນແປງຂອງພວກເຂົາເຈົ້າເປັນຄວາມຮູ້ສຶກທີ່ລົ້ນເຫຼືອໃນໃຈຂອງໂຢເຊັບ. ລາວໄດ້ເອົາຊະນະຄວາມຮູ້ສຶກອາລົມຂອງລາວຈົນຕ້ອງສະແດງອອກຄວາມໂສກເສົ້າດ້ວຍສຽງອັນດັງ, ແລະໂດຍຢຶດນ້ຳຕານັ້ນ, ລາວໄດ້ກ້າໂຕ້ຕອບ. ຄື້ນແຫ່ງຄວາມຢ້ານກົວໄດ້ພັດເຂົ້າໄປໃນບັນດາອ້າຍຂອງໂຢເຊັບ. ຄາວກ່ອນພວກເຂົາເຈົ້າເປັນຄົນແປກໜ້າ, ບັດນີ້ໂຢເຊັບຮ້ອງພວກເຂົາເຈົ້າວ່າອ້າຍນ້ອງຢ່າງກະທັນຫັນ. ບັນດາພວກອ້າຍແນ່ນອນແມ່ນຢ້ານການຖືກລົງໂທດ. ໂຢເຊັບໄດ້ສະແດງໃຫ້ເຫັນຢູ່ສເມີອຳນາດແລະສິດທີ່ຢູ່ຕໍ່ໜ້າພວກເຂົາເຈົ້າ, ແຕ່ດຽວນີ້ພວກເພິ່ນໄດ້ຮູ້ວ່າໂຢເຊັບເປັນນ້ອງຊາຍຂອງພວກເພິ່ນເໝືອນກັນ. ພວກເຂົາເຈົ້າແນ່ນອນຢ້ານວ່າໂຢເຊັບຈະໃຊ້ອຳນາດນັ້ນເປັນເຄື່ອງແກ້ແຄ້ນສຳລັບໝົດທຸກສິ່ງທີ່ບັນດາພວກອ້າຍໄດ້ເຮັດໃຫ້ລາວ. ມັນບໍ່ເປັນການແຈ່ມແຈ້ງສຳລັບບັນດາພວກອ້າຍວ່າ: ນ້ຳຕາຂອງໂຢເຊັບແມ່ນການສະທ້ອນເຖິງຄວາມຊົມຊື່ນຍິນດີ ແລະ ບໍ່ແມ່ນການຂົມຂື່ນຂອງລາວ. ໃນຂນະທີ່ພວກເຮົາສືບຕໍ່ເຣື່ອງລາວຂອງໂຢເຊັບ, ພວກເຮົາເຫັນຢ່າງແຈ່ມແຈ້ງຄວາມຮັກ, ຄວາມຫ່ວງໃຍ, ແລະການໃຫ້ອະພັຍ ຕໍ່ບັນດາອ້າຍຂອງລາວ. ແຕ່ໃນຂນະນັ້ນບັນດາອ້າຍຂອງລາວຄົງຕົກຕະລຶງຫຼາຍທີ່ຈະຮູ້ສຶກໃນຄວາມຮັກຂອງໂຢເຊັບ. ໂຢເຊັບບໍ່ໄດ້ເຊື່ອງອະດີດເບື້ອງຫຼັງໄວ້ ຫຼືສະແດງອາການເໝືອນກັບວ່າບໍ່ມີຫຍັງເກີດຂຶ້ນ, ແລະລາວບໍ່ເຄີຍໄດ້ໃຫ້ອະດີດນັ້ນຢູ່ໃນຄວາມຊົງຈຳຂອງບັນດາພວກອ້າຍຂອງລາວ. **ລາວເລືອກເອົາການເດີນໜ້າຕໍ່ໄປຈາກອະດີດຕະການທີ່ຜ່ານໄປ.**

## 2. ປະຖົມມະການ 45:4-5

*[4] ແລ້ວໂຢເຊັບຈຶ່ງເວົ້າຕໍ່ໄປວ່າ, "ຈົ່ງພາກັນຫຍັບເຂົ້າມາໃກ້ຂ້ອຍ" ພວກເຂົາກໍຫຍັບເຂົ້າໄປໃກ້ ແລ້ວເພິ່ນເວົ້າວ່າ, "ຂ້ອຍແມ່ນໂຢເຊັບນ້ອງຊາຍຂອງພວກເຈົ້າ ຊຶ່ງພວກເຈົ້າໄດ້ຂາຍມາປະເທດເອຢິບ. [5] ບັດນີ້ ຢ່າໄດ້ກະວົນກະວາຍໃຈ ຫລືຕິຕົນເອງທີ່ຂາຍຂ້ອຍມາທີ່ນີ້ ແມ່ນພຣະເຈົ້າແທ້ໆທີ່ຊົງໃຊ້ຂ້ອຍມາທີ່ນີ້ກ່ອນ ເພື່ອຊ່ອຍເຫລືອຊີວິດພວກເຈົ້າ.*

ໂຢເຊັບໄດ້ຕັດສິນໃຈລືມຄວາມຜິດບາບຂອງພວກອ້າຍຂອງລາວ, ແລະເມື່ອເຮັດດັ່ງນັ້ນ, ລາວໄດ້ເປີດເຜີຍນ້ຳພຣະທັຍ(ຫົວໃຈ)ຂອງອົງພຣະບິດາໃນຟ້າສວັນ. ລາວໄດ້ເລືອກເອົາການໃຫ້ອະພັຍທີ່ໂຫດຫຼັ້ມຂອງພວກອ້າຍຂອງລາວ. ຈົ່ງສັງເກດຄວາມຮັກຊຶ່ງລາວໄດ້ສະແດງອອກໃນຂນະທີ່ລາວເຫັນພວກເຂົາເຈົ້າກຳລັງຢືນຢູ່ໃນຫ້ອງ: "ຈົ່ງພາກັນຫຍັບເຂົ້າມາໃກ້ຂ້ອຍ". ຄວາມຮູ້ສຶກໃຈຮ້າຍໂກດເຄືອງໃດໆກໍກຳລັງຖືກກຳຈັດອອກໄປ**ໂດຍຣິດອຳນາດຂອງພຣະຄຸນ**. ບໍ່ມີການເກັບກຳເອົາໄວ້ແບບລັບໆ. ບໍ່ມີຄວາມໃຈຮ້າຍ. ບໍ່ມີຈິນຕະນາການຂອງການແກ້ແຄ້ນ. ໂຢເຊັບໄດ້ພ້ອມທີ່ຈະອະພັຍໂທດແກ່ພວກອ້າຍຂອງລາວຢ່າງເຕັມປ່ຽມ.

ຊ່ວງເວລາດຶກກຳບັນລະຫວ່າງໂຢເຊັບແລະພວກອ້າຍຂອງລາວສົມຄວນກວນໝາກຫົວໃຈທີ່ທັນສມັຍຂອງພວກເຮົາໃຫ້ມີ

ການໃຫ້ອະພັຍ. ພວກເຮົາທັງໝົດຕ້ອງການ ການຖືກຍົກໂທດ, ຖືກຍອມຮັບ, ແລະຖືກຮັກ. ພວກເຮົາປາຖນາຮັບເອົາການໃຫ້ອະພັຍ ແລະພວກເຮົາຍັງລົ້ນລຸກຄຸກຄານໃນການໃຫ້ອະພັຍນັ້ນຢູ່! ທຸກໆວັນອາທິດ, ຊາວຄຣິສຕຽນສເລີມສລອງສະພານແຫ່ງການໃຫ້ອະພັຍຊຶ່ງໄດ້ຖືກຊົງສ້າງຂຶ້ນໂດຍອົງພຣະເຢຊູຄຣິດ. ມັນແມ່ນຈຸດສູນກາງແຫ່ງຄວາມເຊື່ອຂອງພວກເຮົາ. **ພຣະຄຣິດໄດ້ຊົງຖືກຄຶງໄວ້ເທິງໄມ້ກາງແຂນສໍາລັບຄວາມບາບຂອງເຮົາ**. ພຣະອົງຊົງຖືກຂ້າຕາຍເພື່ອເສລີພາບຂອງພວກເຮົາ. ພຣະອົງໄດ້ຊົງສລະພຣະຊົນ(ຊີວິດ)ຂອງພຣະອົງແລະຊົງສ້າງສະພານ(ຂົວ)ຈາກການກ່າວໂທດສູ່ຄວາມລອດພົ້ນ. ທຸກໆທ້າຍອາທິດ, ຫຼາຍພັນຄົນຍ່າງເຂົ້າມາໂບດທຸກແຫ່ງຂອງພວກເຮົາເພື່ອຮ້ອງເພງ ແລະເພື່ອຂອບພຣະຄຸນພຣະອົງທີ່ໄດ້ຊົງປະທານຂົວອັນງົດງາມນັ້ນທີ່ໃຫ້ພວກເຮົາສາມາດຍ່າງຜ່ານໄປໄດ້.

ໂຢເຊັບໄດ້ມອງເຫັນຮູບພາບອັນໃຫຍ່(ສາຍຕາກ້ວງໄກ), ດ້ວຍເຫດນີ້ລາວຈຶ່ງບໍ່ປາຖນາໃຫ້ພວກອ້າຍຂອງລາວຕິຕຽນໃສ່ຮ້າຍປ້າຍສີຕົນເອງ. ໂຢເຊັບບໍ່ໄດ້ໂທດການກະທໍາຂອງພວກເພິ່ນ, ແຕ່ໄດ້ມອງເຫັນພຣະເຈົ້າຍັງໄດ້ຊົງທໍາງານເພື່ອໄຖ່ຖອນສະຖານະການຮ້າຍແຮງສໍາລັບພຣະຣັສມີພາບຂອງພຣະອົງ. ພຣະເຈົ້າຊົງສາມາດໃຊ້ແມ້ກະທັ້ງຄວາມເຈັບປວດທີ່ເກີດຂຶ້ນກັບພວກເຮົາ. ***ແລະພວກເຮົາຈະບໍ່ຍອມໃຫ້ອະພັຍໄດ້ຢ່າງໃດ ໃນເມື່ອພຣະເຈົ້າໄດ້ຊົງໃຫ້ອະພັຍແກ່ພວກເຮົາຫຼາຍຂຶ້ນກວ່ານີ້?***

*ແມ່ນຫຍັງເຮັດໃຫ້ພວກເຮົາຍຶດໝັ້ນໃນຄວາມໂກດແຄ້ນແລະຂັດຂວາງການໃຫ້ອະພັຍຂອງພວກເຮົາ?*

### 3. ປະຖົມມະການ 45:9-11

*9 ບັດນີ້ ພວກເຈົ້າຈົ່ງພາກັນຟ້າວເມືອຫາພໍ່ແລະນໍາຄໍາສັ່ງຂອງຂ້ອຍເມືອບອກເພິ່ນວ່າ ພຣະເຈົ້າໄດ້ປະທານໃຫ້ຂ້ອຍເປັນຜູ້ປົກ*
*ຄອງປະເທດເອຢິບ ໃຫ້ພໍ່ມາຫາຂ້ອຍໄວທີ່ສຸດ. 10 ໃຫ້ພໍ່ເອງມາພ້ອມລູກຫລານ ຝູງແກະ ແລະຝູງແບ້ ທັງງົວຄວາຍ ແລະ*
*ທຸກສິ່ງທີ່ພໍ່ມີ ຂ້ອຍຈະໃຫ້ພໍ່ຢູ່ເຂດໂກເຊັນບ່ອນທີ່ໃກ້ກັບຂ້ອຍ. 11 ຖ້າພໍ່ຢູ່ໂກເຊັນ ຂ້ອຍກໍສາມາດເບິ່ງແຍງເພິ່ນໄດ້ ຄວາມອຶດ*
*ຢາກຍັງຈະມີອີກຫ້າປີ ແລະຂ້ອຍບໍ່ຢາກໃຫ້ພໍ່ພ້ອມກັບຄົນທັງປວງທີ່ພໍ່ມີຕ້ອງອຶດຢາກ.”*

*ໂຢເຊັບສາມາດໃຫ້ອະພັຍແກ່ບັນດາອ້າຍຂອງລາວ ທັ້ງໆທີ່ລາວມີຄວາມເຈັບປວດໄດ້ຢ່າງໃດ?*

ໃນຖານະເປັນໄພ່ພົນຂອງພຣະເຈົ້າ, ພວກເຮົາໄດ້ຖືກອວຍພຣະພອນເພື່ອເປັນທໍ່ພຣະພອນສໍາລັບຄົນອື່ນ. ແບ່ງປັນຊີວິດແລະຂອງປະທານ(ພຣະພອນ)ແກ່ຄົນອື່ນແມ່ນຈຸດສູນກາງຂອງຜູ້ທີ່ພວກເຮົາເປັນ: **ຜູ້ຕິດຕາມພຣະຄຣິດ**. ການຕິດຕາມອົງພຣະເຢຊູ ມີຄວາມໝາຍວ່າພວກເຮົາຮັບໃຊ້ພຣະເຈົ້າໃນຂນະທີ່ພວກເຮົາຮັບໃຊ້ຄົນອື່ນ. ໃນພຣະຄັມພີປະຖົມມະການ 45:7,ໂຢເຊັບໄດ້ບັນລະຍາຍເຫດຜົນທີ່ເຮັດໃຫ້ລາວຖືກເລື່ອນຊັ້ນອັນຍິ່ງໃຫຍ່ໃນອີຢິບ: “*ພຣະເຈົ້າໄດ້ຊົງໃຊ້ຂ້ອຍມາກ່ອນພວກເຈົ້າ ເພື່ອຊ່ອຍເຫຼືອຊີວິດຂອງພວກເຈົ້າໄວ້ ແລະເພື່ອໃຫ້ເຊື້ອສາຍຂອງພວກເຮົາມີຢູ່ສືບຕໍ່ໄປ.*” ໂຢເຊັບໄດ້ຮັບການຍົກຍ້ອງຈາກພຣະເຈົ້າ, ເພື່ອຈຸດປະສົງຂອງການຮັບໃຊ້ຄົນອື່ນ.

ດ້ວຍເຫດວ່າໂຢເຊັບໄດ້ຫຼິງເຫັນຊ່ວງເວລາຍືດຍາວແຫ່ງຄວາມອຶດຢາກກ່ອນພວກອ້າຍຂອງລາວ, ລາວໄດ້ສັ່ງການໃຫ້ພວກອ້າຍກັບເມືອບ້ານ ແລະກັບຄືນມາໂດຍດ່ວນພ້ອມດ້ວຍພໍ່, ຄອບຄົວທັງໝົດຂອງເພິ່ນແລະຊັບສົມບັດທັງໝົດ. ລາວສືບຕໍ່ການໃຫ້ອະພັຍແກ່ພວກອ້າຍໂດຍການສແວງຫາສິ່ງທີ່ດີທີ່ສຸດສໍາລັບພວກເພິ່ນ. ໂດຍຄໍາສັນຍາຂອງນ້ອງຊາຍ(ໂຢເຊັບ)ທີ່ຈະເບິ່ງແຍງ, ບັນດາພວກອ້າຍກໍໄດ້ພາກັນກັບເມືອບ້ານດ້ວຍຄວາມຍິນດີແລະຄວາມຫວັງ. ໂຢເຊັບບໍ່ພຽງແຕ່ໄດ້ອະພັຍໂທດໃນອະດີດເທົ່ານັ້ນ, ແຕ່ລາວຍັງຈະໄດ້ເບິ່ງແຍງພວກເຂົາເຈົ້າໃນອະນາຄົດນໍາອີກດ້ວຍ.

ບາງທີອາດຈະເປັນການດີທີ່ຈະຢຸດແລະພິຈາລະນາວ່າ: ພວກເຮົາອາດຈະປະເມີນຄ່າຂອງຄວາມຊົມຊື່ນຍິນດີໃນອະນາ

ຄິດຕໍ່າເກີນໄປໃນການຕິດຕາມອົງພຣະເຢຊູ. ແນວໂນ້ມຂອງພວກເຮົາແມ່ນໃຫ້ຄວາມສຳຄັນກັບການໃຫ້ອະພັຍໃນອະດີດ. ມັນບໍ່ຍາກເລີຍທີ່ລຳພຶງວ່າເປັນດ້ວຍເຫດໃດ! ຄວາມຮູ້ສຶກຜິດນັ້ນມັນໜັກໜ່ວງຫຼາຍ. ພວກເຮົາທັງໝົດມີຄວາມຮູ້ສຶກນັ້ນໄດ້. ເຖິງຢ່າງໃດກໍຕາມ, ການປົດປ່ອຍຈາກອະດີດເປັນພຽງແຕ່ເຄິ່ງນຶ່ງຂອງຂັ້ນຕອນ. ການດຳເນີນຊີວິດໃນພຣະຄຣິດມີຄວາມໝາຍວ່າການມີຊີວິດໂດຍປາສຈາກຄວາມຢ້ານກົວໃນອະນາຄົດ. **<u>ພຣະອົງຈະຊົງດູແລເຮົາໃນເມື່ອພວກເຮົາຈັບຕາໃສ່ພຣະອົງ.</u>**

ໂຢເຊັບໄດ້ຮັບປະກັນວ່າພວກບັນດາອ້າຍຂອງລາວຈະບໍ່ມີຫຍັງທີ່ຈະຢ້ານກົວເລີຍໃນອະນາຄົດ. ລາວຈະ<u>ຄ້ຳຈຸນ</u>,<u>ເບິ່ງແຍງ</u>, ແລະ<u>ຮັກ</u>ພວກເຂົາເຈົ້າ. ເພາະວ່າໂຢເຊັບມີວິທີທາງ, ຄອບຄົວຂອງລາວທັງໝົດສາມາດດຳເນີນຊີວິດຢູ່ໂດຍປາສຈາກຄວາມວິຕົກກັງວົນແລະຄວາມຢ້ານກົວ. **<u>ພວກເຮົາບໍ່ມີສິ່ງໃດທີ່ຈະຢ້ານກົວໃນອະນາຄົດໃນເມື່ອຄວາມໄວ້ວາງໃຈຂອງພວກເຮົາຢູ່ໃນພຣະຄຣິດ</u>. <u>ສັນລະເສີນອົງພຣະຜູ້ເປັນເຈົ້າທີ່ພວກເຮົາດຳເນີນຊີວິດຢູ່ພາຍໃຕ້ຮົ່ມພຣະຄຸນແຫ່ງຄວາມຮັກຂອງພຣະອົງ.</u>**

## ນຳໃຊ້ໃນຊີວິດ:

ສຳພັນທະພາບສາມາດກ້າວໜ້າໄປດ້ວຍການໃຫ້ອະພັຍເທົ່ານັ້ນ. ຈົ່ງໃຊ້ນຶ່ງໃນການນຳໃຊ້ດັ່ງຕໍ່ລົງໄປນີ້:

- **ຈົ່ງມີສະຕິລະວັງຕົວ.** ໃນລະຍະສອງສາມມື້ຕໍ່ໄປນີ້, ຈົ່ງມີສະຕິລະວັງຕົວໃນຂນະທີ່ທ່ານມີຄວາມຮູ້ສຶກສຳນຶກຜິດ. ຈົ່ງເຂົ້າຫາພຣະເຈົ້າໂດຍທັນທີທັນໃດ ແລະສແວງຫາພຣະຄຸນພຣະເຈົ້າເພື່ອລ້າງຄວາມເຈັບປວດຂອງທ່ານ.
- **ຈົ່ງເປີດຈິດເປີດໃຈ.** ຈົ່ງລະວັງເມື່ອທ່ານຫັນໄປຫາກຳແພງຫີນ(ມືດແປດດ້ານ) ຫຼືເລືອກເອົາການປິ່ນປົວແບບງ່າຍໆ. ເຖິງແມ່ນວ່າຮູບແບບຂອງຄວາມໂກດແຄ້ນພາຍໃນເຫຼົ່ານີ້ຈະບໍ່ຮ້າຍແຮງ, ແຕ່ມັນກໍບໍ່ໄດ້ສ້າງຄວາມເສັຽຫາຍໃຫ້ໜ້ອຍລົງ.
- **ຈົ່ງຊ່ວຍເຫຼືອຄົນອື່ນ.** ຈົ່ງໃຊ້ເວລາບາງຊ່ວງຮັບຟັງຄວາມເຈັບປວດກ່ຽວກັບບັນຫາເຣື່ອງສາຍສັມພັນຂອງຄົນອື່ນ. ຈົ່ງວາງແຜນຈັດເວລາດື່ມກາເຟກັບໃຜຜູ້ນຶ່ງຊຶ່ງມີຄວາມເຈັບປວດ ແລະຢ່າງຄຽງຂ້າງກັບລາວ. ທ່ານອາດສເນີໃຫ້ການໄກ່ເກັ່ງ ຫຼື ພຽງແຕ່ແບ່ງປັນຫຼັກການທີ່ເປັນປໂຍດບາງຢ່າງໃນພຣະຄັມພີ ຈາກຊີວິດຂອງໂຢເຊັບ.

ພວກເຮົາສ່ວນໃຫຍ່ຮັບຮູ້ອາຫານທີ່ໜ້າຂີ້ດຽດ(ບໍ່ເປັນຕາຢາກ)ທີ່ເຮັດໃຫ້ໃບໜ້າຂອງພວກເຮົາເປັນຕາຢ້ານ(ໜ້າບູດ). ພວກເຮົາມີເວລາທີ່ຍາກກວ່າທີ່ຈະຮັບຮູ້ເຖິງຄວາມເຈັບປວດອັນເລິກຊຶ້ງໃນຫົວໃຈຂອງພວກເຮົາ ທີ່ເຮັດໃຫ້ຊີວິດກ້າວໄປຂ້າງໜ້າຫຍຸ້ງຍາກຂຶ້ນ.ໂຢເຊັບສອນພວກເຮົາເຖິງພະລັງຂອງການໃຫ້ອະພັຍແລະການລືມຄວາມບາບ.**ຈົ່ງຕິດຕາມຕົວຢ່າງຂອງລາວ!**

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ SSK**